ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 3647 /ກປ

ນະຄອນຫຼວງວຽງຈັນ, ວັນທີ 17 AUG 2023

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດນຳໃຊ້ ເວັບໄຊ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສະບັບເລກທີ 0945/ຄພດກ, ລົງວັນທີ 13 ກໍລະກົດ 2023.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

**ມາດຕາ 1** ເຫັນດີອະນຸມັດໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເປີດນຳໃຊ້ ເວັບໄຊ (**website**) ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຊື່ເວັບໄຊແມ່ນ: **https://dalam.maf.gov.la** ເພື່ອນຳໃຊ້ເກັບກຳຂໍ້ມູນ, ເຜີຍແຜ່ ແລະ ແລກປ່ຽນຂໍ້ມູນຂ່າວສານ, ບັນດານິຕິກຳ ກ່ຽວກັບ ວຽກງານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໃນໄລຍະໃໝ່ ຜັນຂະຫຍາຍຍຸດທະສາດຂອງ ກະຊວງກະສິກຳ ແລະ ປ່າໄມ້ ໃນການສຳຫຼວດ ກຳນົດ, ຄຸ້ມຄອງ ແລະ ພັດທະນາເຂດປູກ ເຂດລ້ຽງ.

**ມາດຕາ 2** ມອບໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສົມທົບກັບຫ້ອງການ, ບັນດາກົມ, ສະຖາບັນ ບັນດາສູນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້; ບັນດາພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງເພື່ອນຳໃຊ້ລະບົບເວັບໄຊດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ ແລະ ພ້ອມກັບຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງກະສິກຳ ແລະ ປ່າໄມ້ ★ ລັດຖະມົນຕີ ★

ປອ. ເພັດ ພົມພິພັກ